**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການກະຊວງ

ເລກທີ: 2482 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 11 ສິງຫາ 2025

ໂຄງການເສີມສ້າງທັກສະທີ່ເປັນບູລິມະສິດ
ສຳລັບການເຕີບໂຕຂອງ ສປປ ລາວ
ສັນຍາເລກທີ : RFQ C2.1-G-13

## ຫນັງສືເຊີນ ເຂົ້າຮ່ວມການປະມູນສົມທຽບລາຄາ

1. ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດ ສຳລັບການເຕີບໂຕຂອງ ສປປ ລາວ, ໄດ້ຮັບອະນຸມັດງົບປະມານ ປະຈຳສົກປີ 2025 ເພື່ອດຳເນີນການປະມູນຈັດຊື້ **ລົດຕູ້ (VAN)** ໃຫ້ຈຸດບໍລິການຈັດຫາງານ, ກົມການຈັດຫາງານ ເພື່ອຮັບໃຊ້ວຽກງານການເຄື່ອນໄຫວກິດຈະກຳຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ດ້ວຍການປະມູນແບບສົມທຽບລາຄາ.
2. ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດ ສຳລັບການເຕີບໂຕຂອງ ສປປ ລາວ ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນແບບສົມທຽບລາຄາ ສຳລັບການຈັດຊື້ **ລົດຕູ້ (VAN)** ໃຫ້ຈຸດບໍລິການຈັດຫາງານ, ກົມການຈັດຫາງານ ເພື່ອຮັບໃຊ້ວຽກງານການເຄື່ອນໄຫວກິດຈະກຳຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ໄລຍະເວລາໃນການສົ່ງມອບ ຫລື ການບໍລິການແມ່ນ **[ 06 ເດືອນ ]**.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນ ການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ **14:00 ໂມງ, ວັນທີ 15 ກັນຍາ 2025, ທີ່ ຫ້ອງປະຊຸມກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຊັ້ນ 3) ບ້ານ ໂພນສະຫວ່າງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ. ໂທລະສັບ 020 91114568, 020 29939999. Email: domesticemploymentdivision@gmail.com cc: psgproject.proc@gmail.com; phonemalykhattiya@gmail.com** ແລະ ຊອງປະມູນສົມທຽບລາຄາທຸກໆຊອງ ຈະໄດ້ເປີດໃນເວລາ **14:10 ໂມງ ວັນທີ 15 ກັນຍາ 2025** ໂດຍຊ້ອງຫນ້າ ຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

**ຫົວໜ້າຫ້ອງການ**
**(ຫົວໜ້າໂຄງການ)**

**ບຸນຍອດ ຈັນທະວອນ**